# ນະໂຍບາຍຄວາມເປັນສ່ວນຕົວ

ອິດສະຫຼະ.ຄອມ ຮັບຮູ້ດີວ່າທ່ານໃຫ້ຄວາມສຳຄັນກັບຂໍ້ມູນສ່ວນຕົວຂອງທ່ານຫຼາຍພຽງໃດ ແລະ ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ທ່ານໃຫ້ຄວາມສົນໃຈເວັບໄຊຂອງພວກເຮົາ.

ເນື່ອງຈາກ ອິດສະຫຼະ.ຄອມ ມີການພັດທະນາ ແລະ ປັບປຸງຢ່າງຕໍ່ເນື່ອງ ດັ່ງນັ້ນ, ນະໂຍບາຍຄວາມເປັນສ່ວນຕົວສະບັບນີ້ ອາດມີການປັບປຸງແກ້ໄຂໃນບາງຄັ້ງ ຈຶ່ງຂໍແນະນຳໃຫ້ທ່ານກວດສອບນະໂຍບາຍດັ່ງກ່າວນີ້ເປັນປະຈຳ ເພື່ອໃຫ້ເຂົ້າໃຈເຖິງນະໂຍບາຍຄວາມເປັນສ່ວນຕົວຫຼ້າສຸດ.

ທ່ານຮັບຊາບວ່າ ການຕິດຕໍ່ຫາພວກເຮົານີ້ ຖືວ່າທ່ານໄດ້ຮັບຊາບ ແລະ ຍິນຍອມປະຕິບັດຕາມນະໂຍບາຍຄວາມເປັນສ່ວນຕົວສະບັບນີ້ ແລະ ສະບັບປັບປຸງເພີ່ມເຕີມໃນອະນາຄົດ.

**ຂໍ້ 1. ການເກັບກຳຂໍ້ມູນສ່ວນບຸກຄົນຂອງທ່ານ**

ພວກເຮົາຈຳເປັນຕ້ອງໄດ້ໃຊ້ຂໍ້ມູນສ່ວນຕົວຂອງທ່ານດັ່ງນີ້:

- ຊື່ ແລະ ນາມສະກຸນ
- ໝາຍເລກໂທລະສັບ
- ອີເມວ
- ຕຳແໜ່ງງານ
- ບໍລິສັດ

ລວມເຖິງຂໍ້ມູນສ່ວນຕົວອື່ນໆເທົ່າທີ່ຈຳເປັນ ໂດຍຂໍ້ມູນຕ້ອງເປັນຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ, ເປັນຂໍ້ມູນປັດຈຸບັນ ແລະ ບໍ່ກໍ່ໃຫ້ເກີດການເຂົ້າໃຈຜິດ, ການຮວບຮວມຂໍ້ມູນດັ່ງກ່າວຈະຊ່ວຍໃຫ້ພວກເຮົາສາມາດຕິດຕໍ່ກັບ ຫຼື ຕອບສະໜອງຕໍ່ຄວາມຕ້ອງການຂອງທ່ານໄດ້.

**ຂໍ້ 2. ຈຸດປະສົງຂອງການໃຊ້ຂໍ້ມູນສ່ວນຕົວ ແລະ ການເປີດເຜີຍຂໍ້ມູນ**

ຈຸດປະສົງເບື້ອງຕົ້ນຂອງພວກເຮົາໃນການຮວບຮວມຂໍ້ມູນສ່ວນຕົວຄື ເພື່ອໃຫ້ພວກເຮົາສາມາດຕິດຕໍ່ກັບ ແລະ ຕອບສະໜອງຕໍ່ຄວາມຕ້ອງການທີ່ແທ້ຈິງຂອງທ່ານໄດ້ຢ່າງຖືກຕ້ອງ, ເຊິ່ງທ່ານໄດ້ຕົກລົງ ແລະ ຍອມໃຫ້ພວກເຮົາສາມາດໃຊ້ຂໍ້ມູນສ່ວນຕົວຂອງທ່ານໃນການຕິດຕໍ່ ຫຼື ສົ່ງຂໍ້ມູນສ່ວນຕົວຂອງທ່ານທັງໝົດ ຫຼື ບາງສ່ວນໃຫ້ຄູ່ຮ່ວມງານ ຫຼື ພັນທະມິດຂອງພວກເຮົາ ເພື່ອໃຫ້ເກີດປະໂຫຍດສູງສຸດແກ່ທ່ານໂດຍບໍ່ຈຳເປັນຕ້ອງແຈ້ງໃຫ້ທ່ານຊາບລ່ວງໜ້າ.

**ຂໍ້ 3. ຄວາມປອດໄພຂອງຂໍ້ມູນສ່ວນຕົວຂອງທ່ານ**

ພວກເຮົາໃຊ້ລະບົບຮັກສາຄວາມປອດໄພແບບ SSL (Secure Socket Layer) ເພື່ອຄຸ້ມຄອງຂໍ້ມູນສ່ວນບຸກຄົນ ແລະ ຄວາມເປັນສ່ວນຕົວຂອງທ່ານ ໂດຍລະບົບດັ່ງກ່າວນີ້ແມ່ນໄດ້ມາດຕະຖານສາກົນ ແລະ ອອກແບບມາເພື່ອຄຸ້ມຄອງຂໍ້ມູນສ່ວນຕົວໂດຍສະເພາະ.

ເພື່ອຄວາມປອດໄພຂອງຂໍ້ມູນສ່ວນຕົວຂອງທ່ານ ແລະ ຜູ້ຕິດຕໍ່ອື່ນໆມາຍັງພວກເຮົາ ທ່ານຕົກລົງວ່າຈະບໍ່ກະທຳການໃດໆ ອັນເປັນການລ່ວງລະເມີດທາງສິດທິສ່ວນບຸກຄົນ, ສິດທິສ່ວນບຸກຄົນພາຍນອກ ແລະ ຊັບສິນທາງປັນຍາຂອງພວກເຮົາ ລວມທັງບໍ່ກະທຳການໃດໆທີ່ຂັດຕໍ່ກົດໝາຍ ໂດຍຈະບໍ່ສົ່ງເນື້ອໃນ, ຮູບພາບ, ພາບເຄື່ອນໄຫວ ຫຼື ຂໍ້ມູນອື່ນໃດທີ່ບໍ່ເໝາະສົມ, ບໍ່ສຸພາບ ກໍ່ໃຫ້ເກີດຄວາມເສຍຫາຍແກ່ພວກເຮົາ ຫຼື ບຸກຄົນອື່ນ, ຫາກຂໍ້ມູນສ່ວນຕົວ ຫຼື ຂໍ້ມູນທີ່ກ່ຽວຂ້ອງຂອງທ່ານ ບໍ່ວ່າຈະເປັນຂໍ້ມູນທົ່ວໄປ ຫຼື ຂໍ້ມູນສ່ວນຕົວໃດຖືກຈາລະກຳທາງຄອມພິວເຕີ (Hack), ສູນຫາຍ ຫຼື ເສຍຫາຍ ນັ້ນບໍ່ແມ່ນຄວາມຜິດຂອງພວກເຮົາ ພວກເຮົາຂໍສະຫງວນສິດທີ່ຈະປະຕິເສດຄວາມຮັບຜິດຊອບໃດໆທີ່ເປັນຜົນມາຈາກສິ່ງດັ່ງກ່າວນັ້ນ.

**ຂໍ້ 4 ການປ່ຽນແປງນະໂຍບາຍຄວາມເປັນສ່ວນຕົວ**

ພວກເຮົາຈະປັບປຸງແກ້ໄຂນະໂຍບາຍຄວາມເປັນສ່ວນຕົວສະບັບນີ້ໄດ້ທຸກເວລາ ໂດຍບໍ່ມີການປະກາດແກ້ໄຂໃນເວັບໄຊຂອງພວກເຮົາ, ການທີ່ທ່ານສົ່ງຂໍ້ມູນສ່ວນບຸກຄົນຜ່ານຊ່ອງທາງຕິດຕໍ່ໃນເວັບໄຊຂອງພວກເຮົາ ຖືເປັນການຍອມຮັບຂໍ້ກຳນົດຂອງນະໂຍບາຍຄວາມເປັນສ່ວນຕົວສະບັບນີ້ ແລະ ເປັນການຍອມຮັບການປັບປຸງແກ້ໄຂນະໂຍບາຍສະບັບນີ້ໃນແຕ່ລະຄັ້ງເຊັ່ນກັນ.

**ຂໍ້ 5. ຂໍ້ມູນຕິດຕໍ່ກັບ**

ຫາກທ່ານຕ້ອງການຂໍ້ມູນເພີ່ມເຕີມ ຫຼື ແຈ້ງບັນຫາຄວາມປອດໄພຂອງຂໍ້ມູນສ່ວນຕົວ ສາມາດຕິດຕໍ່ຫາພວກເຮົາໄດ້ທີ່ idsala.com@gmail.com